ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 333 /ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2023

# ແຈ້ງການ

**ເຖິງ:** - ທ່ານ ຜູ້ອານວຍການສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
- ທ່ານ ຜູ້ອານວຍການສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ.

**ເລື່ອງ:** ອັດຕາດອກເບ້ຍເງິນກູ້ສະເລ່ຍໜຶ່ງປີ ຂອງທະນາຄານທຸລະກິດທົ່ວລະບົບ ເພື່ອນຳໃຊ້ເຂົ້າໃນການໄລ່ລຽງອັດຕາດອກເບ້ຍເງິນກູ້ຢືມ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາດອກເບ້ຍ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ເລກທີ 319/ທຫລລົງວັນທີ 20 ພຶດສະພາ 2020.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບອັດຕາດອກເບ້ຍເງິນກູ້ສະເລ່ຍໜຶ່ງປີ ຂອງທະນາຄານທຸລະກິດທົ່ວລະບົບ, ເພື່ອເປັນພື້ນຖານໃນການຄິດໄລ່ ແລະ ກຳນົດນະໂຍບາຍອັດຕາດອກເບ້ຍເງິນກູ້ຢືມ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ. ອັດຕາດອກເບ້ຍເງິນກູ້ສະເລ່ຍແມ່ນ **9,46% ຕໍ່ປີ** ຊຶ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ **01 ມິຖຸນາ 2023.**

**ວິທີການຄິດໄລ່ອັດຕາດອກເບ້ຍເງິນກູ້ສູງສຸດບໍ່ເກີນ:**

9,46% x 4 = 37,84% ຕໍ່ປີ;

37,84% / 12 = 3,15% ຕໍ່ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມ

ພູຂົງ ຈັນທະຈັກ